ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ 414/ຫກ

ນະຄອນຫຼວງວຽງຈັນ, ວັນທີ 28 ພະຈິກ 2018

ສໍານັກງານ ຄຄຊ
ເລກ 1254
ວັນທີ 29 NOV 2018
ໂທລະສັບ 021 217770

# ແຈ້ງການ

**ເຖິງ:** ບັນດາທ່ານ ຫົວໜ້າກົມ, ທຽບເທົ່າກົມ, ຫົວໜ້າທະນະຄານແຫ່ງ ສປປ ລາວ ປະຈໍາພາກ.

**ເລື່ອງ:** ການຫັກອາກອນເງິນນະໂຍບາຍຂອງ ທຫລ.

- ອີງຕາມບົດບັນທຶກກອງປະຊຸມຄະນະເຮັດວຽກຮ່ວມກັບອົງການກວດສອບແຫ່ງລັດ ລົງວັນທີ 23 ຕຸລາ 2018;
- ອີງຕາມໜັງສືລາຍງານເພື່ອຈັດຕັ້ງປະຕິບັດເສຍອາກອນເລກທີ 203 /ຫກ ລົງວັນທີ 20 ພະຈິກ 2018.

ຫ້ອງການທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ກ່ຽວກັບການປະຕິບັດນະໂຍບາຍ (ຄ່າເຊົ່າເຮືອນ, ອັດຕາຄ່າໂທລະສັບ, ຄ່າເຊື້ອເພີງຫຼຸຕົ້ມ ແລະ ເງິນຄ່າຄວາມສວຍຄວາມງາມ) ທີ່ຜ່ານມາການເບີກຈ່າຍນະໂຍບາຍດັ່ງກ່າວ, ທາງ ທຫລ ແມ່ນບໍ່ໄດ້ຫັກເສຍອາກອນ. ເພື່ອປະຕິບັດໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍສ່ວຍສາອາກອນ ແລະ ເພື່ອຕິດຕາມຂໍ້ຄົງຄ້າງຈາກຜົນການກວດສອບຕໍ່ວຽກງານຂອງ ທຫລ ຂອງອົງການກວດສອບແຫ່ງລັດໃນປີຜ່ານມາ ສະນັ້ນ, ທາງຫ້ອງການແມ່ນຈະໄດ້ຫັກອາກອນ 5% ຈາກລາຍຮັບການປະຕິບັດນະໂຍບາຍດັ່ງກ່າວ, ເຊິ່ງຈະເລີ່ມຈັດຕັ້ງປະຕິບັດໃນຕົ້ນປີ 2019 ເປັນຕົ້ນໄປ. ສະນັ້ນ, ຫ້ອງການຈຶ່ງແຈ້ງມາຍັງທ່ານ ເພື່ອເຮັດວຽກການເມືອງແນວຄິດໃຫ້ພະນັກງານຂອງຕົນໃຫ້ເຂົ້າໃຈຕໍ່ລະບຽບຫຼັກການ ແລະ ການຕົກລົງຂອງຂັ້ນເທິງດ້ວຍ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ຈຶ່ງຮັບຮູ້ ແລະ ເຂົ້າໃຈຕາມນັ້ນ.

ຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ